ໃຫ້ຮອງທ່ານ ... ພະແນກ ... ເພື່ອ ...

8.11.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ

ຫ້ອງວ່າການ

ເລກທີ: 881 /ຫວນວ

ວັນທີ: 07.11.2024

**<u>ໜັງສືສະເໜີ</u>**

**ຮຽນ:** ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

**ເລື່ອງ:** ຂໍອະນຸມັດຈັດຊື້ລົດ ຮັບໃຊ້ວຽກງານຂອງ ຫ້ອງວ່າການນະຄອນຫຼວງວຽງຈັນ.

- ອີງຕາມ ຂໍ້ຕົກລົງເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການນະຄອນຫຼວງວຽງຈັນ ສະບັບເລກທີ 889/ຈນວ, ລົງວັນທີ 18/8/2023;
- ອີງຕາມ ຕາມທິດຊີ້ນຳຂອງການນຳນະຄອນຫຼວງວຽງຈັນ ຄັ້ງວັນ 9 ຕຸລາ 2024;
- ອີງຕາມ ຄວາມຈຳເປັນ ແລະ ຂາດເຂີນ ໃນການນຳໃຊ້ລົດເຂົ້າໃນການປະຕິບັດວຽກງານຂອງ ຫ້ອງວ່າການນະຄອນຫຼວງວຽງຈັນ.

ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານໃນການເປັນເສນາທິການຮັບໃຊ້ການນຳ, ຄະນະພັກ, ອົງການປົກຄອງ ແລະ ວຽກງານປົ້ນອ້ອມຕ່າງໆ ຂອງຫ້ອງວ່າການນະຄອນຫຼວງວຽງຈັນ ໃຫ້ມີຄວາມສະດວກ, ຄວາມພ້ອມ ແລະ ຄວາມປອດໄພ, ຫ້ອງວ່າການນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ຂໍອະນຸມັດຈັດຊື້ລົດໃຫຍ່ ຈຳນວນ 3 ຄັນ ເພື່ອມາຮັບໃຊ້ວຽກງານບໍລິຫານລວມ ມີດັ່ງນີ້:

1. ປະເພດລົດຈີບ Toyota Land Cruiser ຈຳນວນ 1ຄັນ, ສຳລັບເຄື່ອນໄຫວຂອງ ສະຫາຍເລຂາຄະນະພັກນະຄອນຫຼວງວຽງຈັນ;
2. ປະເພດລົດຈີບ Toyota Land Cruiser Prado ຈຳນວນ 1ຄັນ, ສຳລັບເຄື່ອນໄຫວຮາກຖານຂອງບັນດາທ່ານຮອງເລຂາ-ຮອງເຈົ້າຄອງ, ທີ່ເຫັນວ່າລົດທີ່ກຳລັງນຳໃຊ້ຢູ່ໃນປັດຈຸບັນແມ່ນມີສະພາບທີ່ເກົ່າ, ບໍ່ຮັບປະກັນການເຄື່ອນໄຫວທາງໄກໄດ້;
3. ປະເພດລົດຕູ້ Toyota Hiace ຈຳນວນ 1ຄັນ, ສຳບັບນຳໃຊ້ເຂົ້າໃນວຽກງານບໍລິຫານຂອງຫ້ອງວ່າການນະຄອນຫຼວງວຽງຈັນ, ເຊິ່ງເຫັນວ່າປັດຈຸບັນຍັງລົດຕູ້ 1ຄັນທີ່ສາມາດເຄື່ອນໄຫວທາງໄກໄດ້.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງວ່າການນະຄອນຫຼວງວຽງຈັນ**

ນະຄອນຫຼວງວຽງຈັນ ຫ້ອງວ່າການ

ປອ. ໄພຄຳ ໄຊຍະສອນ